**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

***********

PCD

ເລກທີ 029 /ພກພ

ນະຄອນຫລວງວຽງຈັນ, ວັນທີ 17/01/2024

# ລາຍງານ

**ຮຽນ:** ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບທີ່ນັບຖື.

ທ່ານ ຜູ້ອຳນວຍການໃຫ່ຍ ຕລຊລ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ບັນດານັກລົງທຶນ ແລະ ຜູ້ຖືຮຸ້ນຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາມະຫາຊົນທີ່ນັບຖື.

**ເລື່ອງ:** ແຜນການແກ້ໄຂການດ້ອຍຄ່າຂອງທືນຂອງ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

- **ອີງຕາມ** ໜັງສືແຈ້ງການຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍກົນໄກການຮັກສາສະຖານະການເປັນບໍລິສັດ ຈົດທະບຽນໃນ ຕລຊລ ຂອງບໍລິລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ.
- **ອີງຕາມ** ການຕົກລົງເຫັນດີຂອງ ສະພາບໍລິຫານຄັ້ງວັນທີ 12 ມັງກອນ 2024

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດລາຍງານມາຍັງທ່ານຊາບກ່ຽວກັບແຜນການແກ້ໄຂການດ້ອຍຄ່າຂອງທືນ ຊື່ງໃນໄລຍະ 3 ປີທີ່ຜ່ານມາ ເກີດມີໂລກລະບາດພະຍາດ COVID 19 ສົ່ງຜົນກະທົບຕໍ່ການດຳເນີນງານຂອງບໍລິສັດຕ້ອງຢຸດເຊົາບາງໂຄງການຕາມສະພາບຄວາມເປັນຈິງ. ສຳລັບໜີ້ຕ້ອງຮັບການຄ້າ ແລະ ອື່ນໆທີ່ມີຍອດເຫຼືອຄ້າງຊຳລະຫຼາຍກ່ວາ 3 ປີ ຈື່ງເຮັດໃຫ້ຊັບສິນ ແລະ ທືນຂອງບໍລິສັດຫຼຸດລົງ ແລະ ເປັນສາເຫດໜຶ່ງທີ່ເຮັດໃຫ້ບໍລິສັດເກີດການດ້ອຍຄ່າຂອງທືນ. ເຖິງຢ່າງໃດກໍຕາມ, ບໍລິສັດ ພກພ ມີແຜນການແກ້ໄຂການດ້ອຍຄ່າຂອງທືນ ດັ່ງນີ້:

## 1. ແຜນການຈັດຕັ້ງປະຕິບັດໃນປີ 2023-2030

1.1 ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເປັນຜູ້ຖືຮຸ້ນບໍ່ຖ່ານຫີນເມືອງວຽງພູຄາ,ແຂວງຫຼວງນ້ຳທາ ກັບ ບໍລິສັດ ແອວນໍເຕີນພັດພະນາ ຈຳກັດຜູ້ດຽວ ແລະ ບໍລິສັດ ພີນນາເຄີລອິນເສີສເມັນຄາປິໂຕ ຈຳກັດຜູ້ດຽວ ລວມທັງໝົດ 25 % ແລະ ເປັນຜູ້ຮັບເໝົາໃນການຂຸດຄົ້ນບໍ່ຖ່ານຫີນເມືອງວຽງພູຄາ, ແຂວງຫຼວງນ້ຳທາ.ຕາມສັນຍາຊື້ຂາຍຖ່ານຫີນ 5.000.000 ໂຕນ ມູນຄ່າ 250.000.000 ໂດລາ ເປັນເວລາ 5 ປີ, ບໍລິສັດ ມີລາຍໄດ້ຈາກການຖືຮຸ້ນສະເລ່ຍ 5 ໂດລາ ຕໍ່ ໂຕນ ຄາດຄະແນລາຍຮັບ

ຈາກການຖືຮຸ້ນ 5,000,000 ໂດລາ ຕໍ່ປີ,ລາຍຮັບ 12ໂດລາ ຕໍ່ ໂຕນ ຄາດຄະເນລາຍຮັບຈາກການການຂຸດຄົ້ນ 12,000,000 ໂດລາ ຕໍ່ປີ, ລວມເປັນ 85ລ້ານໂດລາ ໃນໄລຍະເວລາ 5 ປີ

1.2 ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທືນ ໂຄງການທາງເວັ້ນຕົວເມືອງດອນໜູນ ຫາ ບ້ານບົວ ນະຄອນຫຼວງວຽງຈັນ ໃນໄລຍະ 30 ກິໂລແມັດ. ຄາດຄະເນມູນຄ່າການລົງທືນ 210 ລ້ານໂດລາ ດ້ວຍຜົນຕອບແທນ 10%

1.3 ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທືນ ໃນພະລັງງານໄຟຟ້າແສງອາທິດ 1000 ເມັກກາວັດ. ຄາດຄະເນມູນຄ່າການລົງທືນ 800 ລ້ານໂດລາ ດ້ວຍຜົນຕອບແທນ 12,8%

1.4 ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ແຜນການສຶກສາການລົງທືນ ໂຄງການພະລັງງານໄຟຟ້ານໍ້າຕົກລວມເປັນ 1150 ເມັກກາວັດ

1.5 ບໍລິສັດ ພູສີກໍ້ສ້າງ ແລະ ພັດທະນາມະຫາຊົນ ກະກຽມມູນຄ່າໂຄງການ

1.5.1. ໂຄງການກໍ່ສ້າງຂົ້ວຂ້າມແມ່ນໍ້າຂອງ ຫຼວງພະບາງ ດ້ວຍທຶນ NEDA

1.5.2. ໂຄງການກໍ່ສ້າງເສັ້ນທາງ R12 ດ້ວຍທຶນ NEDA

1.5.3. ໂຄງການກໍ່ສ້າງການເຈື່ອນ ແຂວງຫຼວງພະບາງ ດ້ວຍທືນ ADCF (ປະເທດເກົາຫຼີ)

1.5.4. ໂຄງການກໍ່ສ້າງສະໜາມຂີ້ເຫຍື້ອ ແລະ ທາງຊອຍໃນຕົວເມືອງ ແຂວງຫຼວງພະບາງ ດ້ວຍທືນທະນາຄານໂລກ World bank

ດ້ວຍເຫດຜົນດັ່ງກ່າວນີ້ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາມະຫາຊົນ ຄາດຄະເນວ່າຈະສາມາດແກ້ໄຂ ການດ້ອຍຄ່າຂອງທືນຕາມແຜນ, ສະນັ້ນ ຈື່ງຮຽນສະເໜີມາຍັງທ່ານຊ່ວຍພິຈາລະນາ ຕາມທາງຄວນດ້ວຍ

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ.

**ຜູ້ອຳນວຍການ**

ໂຍທາທິການ ແລະ ຂົນສົ່ງ ກະຊວງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company ນະຄອນ ຫຼວງ ວຽງຈັນ

**ສີທາ ພົມມະຈິດ**